ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0752/ອຄ
ນະຄອນຫຼວງວຽງຈັນ, ວັນທີ 23 ພຶດສະພາ 2023

# ຂໍ້ຕົກລົງ
# ວ່າດ້ວຍການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ດຳລັດ ວ່າດ້ວຍການນຳເຂົ້າ ແລະ ການສົ່ງອອກສິນຄ້າ ສະບັບເລກທີ 114/ລບ, ລົງວັນທີ 06 ເມສາ 2011;
- ອີງຕາມ ໜັງສືສະເໜີຂອງກົມການນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 1160/ກຂອ, ລົງວັນທີ 03 ພຶດສະພາ 2023.

## ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ລະບຽບການ ແລະ ມາດຕະການ ກ່ຽວກັບການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ຢູ່ ສປປ ລາວ ເພື່ອຕິດຕາມການນຳເຂົ້າ ແລະ ສົ່ງອອກສິນຄ້າ ແບບລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ການຄ້າເຂົ້າສູ່ລະບົບ, ຮັບປະກັນການຄຸ້ມຄອງລາຍຮັບ ແລະ ການຊຳລະເປັນເງິນຕາຈາກການນຳເຂົ້າ ແລະ ສົ່ງອອກສິນຄ້າ, ສົ່ງເສີມການຜະລິດສິນຄ້າພາຍໃນທີ່ມີທ່າແຮງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 ການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ**

ການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ແມ່ນເກັບກຳຂໍ້ມູນຜູ້ທີ່ດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກ ສິນຄ້າທີ່ລັດຖະບານຄຸ້ມຄອງລາຍຮັບ ແລະ ການຊຳລະຈາກການນຳເຂົ້າ ແລະ ສົ່ງອອກ ເປັນອັນສະເພາະ ແລະ ສິນຄ້າທີ່ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ.

ກ່ອນສາມາດນຳເຂົ້າ ແລະ ສົ່ງອອກສິນຄ້າ ທີ່ລັດຖະບານຄຸ້ມຄອງ ແລະ ທີ່ກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ຜູ້ນຳເຂົ້າ ແລະ ສົ່ງອອກ ຕ້ອງລົງທະບຽນນຳກະຊວງອຸດສາຫະກຳ ແລະ ການຄ້າ. ກະຊວງອຸດ

ສາຫະກຳ ແລະ ການຄ້າ ເປັນໃຈກາງປະສານສົມທົບກັບຂະແໜງການກ່ຽວຂ້ອງ ໃນການກຳນົດລາຍການສິນຄ້າດັ່ງກ່າວ ທີ່ຕ້ອງໄດ້ລົງທະບຽນ ເປັນແຕ່ລະໄລຍະ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າ** ໝາຍເຖິງ ວິສາຫະກິດ ແລະ ຜູ້ຄ້າຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດນຳເຂົ້າ ແລະ ສົ່ງອອກສິນຄ້າ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. **ສິນຄ້າ** ໝາຍເຖິງ ຜະລິດຕະພັນທີ່ມີມູນຄ່າທາງເສດຖະກິດ ຊຶ່ງຖືກນຳເຂົ້າ ແລະ ສົ່ງອອກ ເພື່ອຈຸດປະສົງການຜະລິດ, ປຸງແຕ່ງ, ຊົມໃຊ້ ແລະ ຈຳໜ່າຍ ຕາມທີ່ໄດ້ກຳນົດໄວ້ໃນປຶ້ມສາລະບານສິນຄ້າ ແລະ ອັດຕາພາສີ ລະບົບເອກະພາບ;
3. **ໃບຢັ້ງຢືນການລົງທະບຽນ** ແມ່ນເອກະສານຢັ້ງຢືນການສຳເລັດການລົງທະບຽນຂອງ ຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າທີ່ລັດຖະບານຄຸ້ມຄອງ ແລະ ສິນຄ້າທີ່ກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ທີ່ອອກໂດຍ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບການນຳເຂົ້າ ແລະ ສົ່ງອອກສິນຄ້າ ຢູ່ ສປປ ລາວ.

## ໝວດທີ 2
## ການສະເໜີຂໍລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ

**ມາດຕາ 5 ເອກະສານປະກອບການລົງທະບຽນ**

ການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າທີ່ ລັດຖະບານຄຸ້ມຄອງ ຫຼື ມີຜົນກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ປະກອບເອກະສານ ສະເໜີຕໍ່ ກົມການນຳເຂົ້າ ແລະ ສົ່ງອອກ ດັ່ງນີ້:

1. ໃບສະເໜີ ຕາມແບບພິມ ທີ່ ກົມການນຳເຂົ້າ ແລະ ສົ່ງອອກ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນສິດທາງດ້ານການຄ້າຂອງຜູ້ຄ້າຕ່າງປະເທດ (ສຳລັບຜູ້ຄ້າຕ່າງປະເທດ);
3. ສຳເນົາໃບອະນຸຍາດດຳເນີນທຸລະກິດ ສຳລັບກິດຈະການທີ່ຕ້ອງຂໍໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 6 ການພິຈາລະນາອອກໃບຢັ້ງຢືນການລົງທະບຽນ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້, ກົມການນຳເຂົ້າ ແລະ ສົ່ງອອກ ຕ້ອງພິຈາລະນາອອກໃບຢັ້ງຢືນການລົງທະບຽນ ໃຫ້ຜູ້ສະເໜີ ພາຍໃນ ສາມ ວັນລັດຖະການ ນັບແຕ່ມື້ໄດ້ຮັບເອກະສານ.

ກໍລະນີເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ຜູ້ກວດກາເອກະສານ ຕ້ອງແຈ້ງໃຫ້ຜູ້ສະເໜີຊາບໂດຍທັນທີ ເພື່ອໃຫ້ປັບປຸງແກ້ໄຂ ໃຫ້ຄົບຖ້ວນ ແລະ ຖືກຕ້ອງ.

**ມາດຕາ 7 ອາຍຸ, ການຕໍ່ອາຍຸ ແລະ ການດັດແກ້ເນື້ອໃນ ໃບຢັ້ງຢືນການລົງທະບຽນ**

ໃບຢັ້ງຢືນການລົງທະບຽນ ມີອາຍຸການນຳໃຊ້ 1 ປີ ແລະ ສາມາດຕໍ່ໄດ້.

ການດັດແກ້ເນື້ອໃນຂອງໃບຢັ້ງຢືນການລົງທະບຽນ ປະກອບດ້ວຍ ການດັດແກ້ ຂໍ້ມູນວິສາຫະກິດ ແລະ ລາຍການສິນຄ້າ.

ຜູ້ທີ່ມີຈຸດປະສົງສະເໜີ ຕໍ່ອາຍຸ ຫຼື ຂໍດັດແກ້ເນື້ອໃນ ໃບຢັ້ງຢືນການລົງທະບຽນ ໃຫ້ປະກອບເອກະສານຍື່ນຕໍ່ ກົມການນໍາເຂົ້າ ແລະ ສົ່ງອອກ ດັ່ງນີ້:

1. ໃບສະເໜີ ຕາມແບບພິມ ທີ່ ກົມການນໍາເຂົ້າ ແລະ ສົ່ງອອກ ກໍານົດ;
2. ສໍາເນົາໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນສິດທາງດ້ານການຄ້າຂອງຜູ້ຄ້າຕ່າງປະເທດ (ສໍາລັບຜູ້ຄ້າຕ່າງປະເທດ);
3. ສໍາເນົາໃບອະນຸຍາດດໍາເນີນທຸລະກິດ ສໍາລັບກິດຈະການທີ່ຕ້ອງຂໍໃບອະນຸຍາດດໍາເນີນທຸລະກິດ;
4. ໃບຢັ້ງຢືນການລົງທະບຽນ ສະບັບຕົ້ນ.

**ມາດຕາ 8 ການອອກໃບຢັ້ງຢືນການລົງທະບຽນ ຄືນໃໝ່**

ກໍລະນີ ໃບຢັ້ງຢືນການລົງທະບຽນ ເສຍຫາຍ ຫຼື ສູນຫາຍ, ຜູ້ນໍາເຂົ້າ ແລະ ສົ່ງອອກສິນຄ້າ ສາມາດສະເໜີຫາ ກົມການນໍາເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກໍາ ແລະ ການຄ້າ ເພື່ອຂໍອອກໃບຢັ້ງຢືນການລົງທະບຽນຄືນໃໝ່ ໂດຍປະກອບເອກະສານ ດັ່ງນີ້:

1.ໃບສະເໜີ ຕາມແບບພິມ ທີ່ ກົມການນໍາເຂົ້າ ແລະ ສົ່ງອອກ ກໍານົດ;
2.ສໍາເນົາ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນສິດທາງດ້ານການຄ້າຂອງຜູ້ຄ້າຕ່າງປະເທດ (ສໍາລັບຜູ້ຄ້າຕ່າງປະເທດ);
3.ສໍາເນົາ ໃບອະນຸຍາດດໍາເນີນທຸລະກິດ ສໍາລັບກິດຈະການທີ່ຕ້ອງຂໍໃບອະນຸຍາດດໍາເນີນທຸລະກິດ;
4.ສໍາເນົາ ໃບຢັ້ງຢືນການລົງທະບຽນ;
5.ໃບແຈ້ງເສຍຫາຍຢັ້ງຢືນຈາກຂະແໜງການປ້ອງກັນຄວາມສະຫງົບ.

**ມາດຕາ 9 ການໂຈະ ຫຼື ຖອນ ໃບຢັ້ງຢືນການລົງທະບຽນ**

ໃບຢັ້ງຢືນການລົງທະບຽນ ຈະຖືກ ໂຈະ ຫຼື ຖອນ ຕາມກໍລະນີ ດັ່ງນີ້:

1. ຜູ້ນໍາເຂົ້າ ແລະ ສົ່ງອອກ ບໍ່ປະຕິບັດຕາມພັນທະທີ່ລະບຸໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;
2. ຜູ້ນໍາເຂົ້າ ແລະ ສົ່ງອອກ ລະເມີດຂໍ້ຫ້າມທີ່ລະບຸໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;
3. ຜູ້ນໍາເຂົ້າ ແລະ ສົ່ງອອກ ສະເໜີຂໍຍົກເລີກການດໍາເນີນກິດຈະການ ດ້ວຍຄວາມສະໝັກໃຈ.

## ໝວດທີ 3
## ສິດ ແລະ ພັນທະ ຂອງຜູ້ນໍາເຂົ້າ ແລະ ສົ່ງອອກ

**ມາດຕາ 10 ສິດຂອງຜູ້ນໍາເຂົ້າ ແລະ ສົ່ງອອກ ສິນຄ້າ**

ຜູ້ນໍາເຂົ້າ ແລະ ສົ່ງອອກ ສິນຄ້າ ມີສິດດັ່ງນີ້:

1. ນໍາເຂົ້າ ແລະ ສົ່ງອອກ ສິນຄ້າ ຕາມທີ່ໄດ້ລະບຸໄວ້ໃນໃບຢັ້ງຢືນການລົງທະບຽນ;
2. ສະເໜີ ດັດແກ້ເນື້ອໃນ, ຕໍ່ອາຍຸ, ໂຈະ ແລະ ຖອນ ໃບຢັ້ງຢືນການລົງທະບຽນ;
3. ສະເໜີຂໍຂໍ້ມູນຂ່າວສານ ແລະ ຝຶກອົບຮົມ ກ່ຽວກັບວຽກງານທີ່ຕິດພັນກັບການນໍາເຂົ້າ ແລະ ສົ່ງອອກສິນຄ້າ;
4. ສະເໜີຮ້ອງທຸກ ຫຼື ລາຍງານການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຫຼື ການເຄື່ອນໄຫວຂອງຜູ້ນໍາເຂົ້າ ແລະ ສົ່ງອອກສິນຄ້າ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ຕໍ່ໜ່ວຍງານກວດກາຂອງພາກສ່ວນກ່ຽວຂ້ອງ;
5. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 11 ພັນທະຂອງຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າ**

ຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າ ມີພັນທະດັ່ງນີ້:

1. ດຳເນີນການຊຳລະການຄ້າ ແລະ ການບໍລິການກັບຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ແຈ້ງເສຍພາສີ ແລະ ອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
3. ມີລະບົບບັນທຶກ ຕິດຕາມສິນຄ້າ ທີ່ ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ;
4. ເກັບສຳເນົາເອກະສານອະນຸຍາດນຳເຂົ້າ ແລະ ສົ່ງອອກ ສິນຄ້າ ແລະ ເອກະສານຢັ້ງຢືນການຊຳລະສະສາງຜ່ານບັນຊີທະນາຄານທຸລະກິດ ຢູ່ ສປປ ລາວ ຄົບຊຸດ;
5. ລາຍງານ ແລະ ສະໜອງຂໍ້ມູນກ່ຽວກັບການນຳເຂົ້າ ແລະ ສົ່ງອອກ ສິນຄ້າ ໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ເປັນແຕ່ລະໄຕມາດ;
6. ນຳໃຊ້ລະບົບທັນສະໄໝເຂົ້າໃນການຄຸ້ມຄອງ ແລະ ຕິດຕາມການດຳເນີນກິດຈະການນຳເຂົ້າ ແລະ ສົ່ງອອກສິນຄ້າຂອງຕົນ;
7. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 12 ຂໍ້ຫ້າມສຳລັບຜູ້ນຳເຂົ້າ-ສົ່ງອອກສິນຄ້າ**

ຫ້າມຜູ້ນຳເຂົ້າ-ສົ່ງອອກສິນຄ້າ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການນຳເຂົ້າ-ສົ່ງອອກສິນຄ້າ ທີ່ລັດຖະບານຄຸ້ມຄອງ ຫຼື ມີຄວາມກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ໂດຍບໍ່ມີໃບຢັ້ງຢືນການລົງທະບຽນ;
2. ນຳເອົາໃບຢັ້ງຢືນການລົງທະບຽນ ໃຫ້ບຸກຄົນອື່ນນຳໃຊ້;
3. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມແປງ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

**ມາດຕາ 13 ຂໍ້ຫ້າມສຳລັບເຈົ້າໜ້າທີ່-ພະນັກງານ**

ຫ້າມເຈົ້າໜ້າທີ່-ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງ, ຖ່ວງດຶງ, ແກ່ຍາວເວລາໃນການກວດກາ ແລະ ພິຈາລະນາອອກໃບຢັ້ງຢືນການລົງທະບຽນ;
2. ສວຍໃຊ້ອຳນາດ, ຕຳແໜ່ງ ຫຼື ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;
3. ປອມແປງເອກະສານ, ປະລະໜ້າທີ່, ຄວາມຮັບຜິດຊອບ ແລະ ບິດເບືອນຄວາມຈິງ;
4. ສົມຮູ້ຮ່ວມຄິດ, ປົກປ້ອງ, ປິດບັງຂໍ້ມູນ ແລະ ໃຫ້ຄວາມຮ່ວມມືແກ່ຜູ້ປະກອບການ;
5. ເປີດເຜີຍຂໍ້ມູນຄວາມລັບ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ນຳເຂົ້າ-ສົ່ງອອກສິນຄ້າທີ່ກ່ຽວຂ້ອງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ການຄຸ້ມຄອງວຽກງານລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ

### ມາດຕາ 14 ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ

ກະຊວງອຸດສາຫະກຳ ແລະ ການຄ້າ ຈັດຕັ້ງປະຕິບັດຄຸ້ມຄອງວຽກງານການລົງທະບຽນຜູ້ນຳເຂົ້າ ແລະ ສົ່ງອອກສິນຄ້າ ຢູ່ ສປປ ລາວ ຢ່າງລວມສູນ ໂດຍມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການ ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້.

### ມາດຕາ 15 ສິດ ແລະ ໜ້າທີ່ຂອງ ກົມການນຳເຂົ້າ ແລະ ສົ່ງອອກ

ກົມການນຳເຂົ້າ ແລະ ສົ່ງອອກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາສ້າງ ແລະ ປັບປຸງ ນິຕິກຳ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານການຢັ້ງຢືນເປັນຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າ ເພື່ອສະເໜີຂັ້ນເທິງຮັບຮອງ ແລະ ປະກາດໃຊ້ ພ້ອມທັງຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
2. ພິຈາລະນາ ອອກ, ໂຈະ ແລະ ຖອນ ໃບຢັ້ງຢືນການລົງທະບຽນ;
3. ກວດສອບການເຄື່ອນໄຫວກິດຈະການຂອງຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າ;
4. ເກັບກຳຂໍ້ມູນ ແລະ ສັງລວມ ສະພາບການການນຳເຂົ້າ ແລະ ສົ່ງອອກ ສິນຄ້າ ເພື່ອລາຍງານຂັ້ນເທິງຊາບ ແລະ ໃຫ້ທິດຊີ້ນຳ;
5. ຈັດກອງປະຊຸມເພື່ອປຶກສາຫາລື, ເຜີຍແຜ່ ແລະ ຖອດຖອນບົດຮຽນຮ່ວມກັບພາກລັດ ແລະ ທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານການຄຸ້ມຄອງຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າ;
6. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຕິດຕາມຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າ ທີ່ເຄື່ອນໄຫວບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ ເປັນຕົ້ນ ການລັກລອບການນຳເຂົ້າ, ການແຈ້ງພາສີນຳເຂົ້າບໍ່ຖືກກັບສິນຄ້າຕົວຈິງ (ປະເພດ, ປະລິມານ, ມູນຄ່າ), ການນຳເຂົ້າຜ່ານດ່ານທີ່ບໍ່ໄດ້ຮັບອະນຸຍາດ ແລະ ອື່ນໆ;
7. ເກັບຮັກສາເອກະສານທີ່ຕິດພັນກັບການຢັ້ງຢືນເປັນຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າ;
8. ສະເໜີຂໍການຊ່ວຍເຫຼືອດ້ານເຕັກນິກ ແລະ ວິຊາການ ເພື່ອປັບປຸງວຽກງານການຢັ້ງຢືນຜູ້ນຳເຂົ້າ ແລະ ສົ່ງອອກ ສິນຄ້າ ໃຫ້ເປັນທັນສະໄໝ;
9. ນຳໃຊ້ງົບປະມານ, ພາຫະນະ, ວັດຖຸອຸປະກອນຮັບໃຊ້ ວຽກງານທາງລັດຖະການ ແລະ ງົບປະມານໂຄງການສົ່ງເສີມວິຊາການທີ່ກົມເປັນຜູ້ຈັດຕັ້ງປະຕິບັດ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 16 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການກ່ຽວຂ້ອງ.

### ມາດຕາ 17 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ຊົດໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

### ມາດຕາ 18 ການຈັດຕັ້ງປະຕິບັດ

ມອບໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ ເປັນເຈົ້າການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ.

### ມາດຕາ 19 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນປະກາດໃຊ້ ສີ່ສິບຫ້າ ວັນ ແລະ ໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ.

ຮ. ລັດຖະມົນຕີ

ບຸນເຖິງ ດວງສະຫວັນ